ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ງານເປີດໂຕເວັບໄຊ ໃຫມ່ຂອງ ຜ-ຟຟລ

ໃນວັນທີ 23 ກຸມພາ 2018, ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ) ໄດ້ຈັດງານເປີດໂຕເວັບໄຊທ໌ ທີ່ມີຮູບແບບໃໝ່, ທີ່ ເດີນກິລາໃນຮົ່ມ ລ້ານຊ້າງ ເຊັນເຕີ. ເຂົ້າຮ່ວມງານໃນຄັ້ງນີ້ມີທ່ານ ຮອງ ລັດຖະມົນຕີກະຊວງການເງິນ, ທ່ານຮອງລັດຖະມົນຕີກະຊວງພະລັງງານ ແລະ ບໍແຮ່, ຄະນະສະພາ ສະພາບໍລິຫານ ຜ-ຟຟລ ພ້ອມດ້ວຍບັນດາທ່ານຄະນະສະພາບໍລິຫານ,ຜູ້ອໍານວຍການໃຫຍ່ ລັດວິສາຫະກິດ ໄຟຟ້າລາວ, ຄະນະຜູ້ອໍານວຍການໃຫຍ່ ຜ-ຟຟລ, ຫົວຫນ້າກົມ, ຮອງກົມ, ຕາງຫນ້າຈາກພາກລັດ ແລະ ເອກະຊົນ ຈໍານວນໜຶ່ງ ລວມທັງບັນດາຄູ່ຮ່ວມທຸລະກິດ, ບັນດານັກຂ່າວສື່ມວນຊົນ ພ້ອມທັງພະນັກງານ ຂອງ ຜ-ຟຟລ ໄດ້ເຂົ້າຮ່ວມຈໍານວນປະມານ 150 ທ່ານ. ໃນການປັບປຸງເວັບໄຊທ໌ຄັ້ງນີ້ ແມ່ນໄດ້ມີການ ປັບປຸງໜ້າຂອງເວັບໄຊທ໌ໃໝ່ ເພື່ອໃຫ້ມີຄວາມທັນສະໄໝ ແລະ ໃຫ້ທັນກັບຍຸກເຕັກໂນໂລຢີໃໝ່ທີ່ຈະກ້າວ ເຂົ້າມາໃນອານາຄົດອັນໃກ , ທັງນັ້ນກໍເພື່ອເປັນການ ເກັບກໍາຂໍ້ມູນພາຍໃນອົງກອນຢ່າງຄົບຖ້ວນ ແລະ ສະດວກສະບາຍໃນການຄົ້ນຫາຂໍ້ມູນຂອງບໍລິສັດ ລວມທັງຜົນການດໍາເນີນທຸລະກິດ ຂອງບໍລິສັດ ເປັນແຕ່ ລະໄລຍະ ແລະ ເພື່ອເຂົ້າກັບສະພາບຂອງການພັດທະນາເສດຖະກິດໃນປັດຈຸບັນ. ສໍາລັບລາຍລະອຽດ ສາມາດຕິດຕາມຂໍ້ມູນສໍາຄັນຕ່າງໆໄດ້ທີ່ www.edlgen.com.la ຮູບແບບໃໝ່ຂອງເວັບໄຊທ໌ ແມ່ນ ປະກອບດ້ວຍລາຍລະອຽດຂອງການດໍາເນີນງານຂອງບໍລິສັດນັບຕັ້ງແຕ່ມີເລີ່ມກໍຕັ້ງ ຈົນເຖິງປັດຈຸບັນລວມ ໄປເຖິງ ບັນດາແຜນງານໃນອະນາຄົດທີ່ຈະໄດ້ມີການພັດທະນາອີກດ້ວຍ.